ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************

ກະຊວງການເງິນ

ເລກທີ.1325/ກງ

ນະຄອນຫລວງວຽງຈັນ,ວັນທີ 20 MAY 2013

# ແຈ້ງການແນະນຳ

ເຖິງ : ບັນດາທ່ານ, ຫົວໜ້າພະແນກການເງິນແຂວງ, ນະຄອນຫລວງ ຫົວໜ້າພະແນກສວ່ຍສາອາກອນ ຫົວໜ້າ ຫລ້ອງຄັງເງິນແຫ່ງຊາດ, ຫົວໜ້າພາສີເຂດ ແລະ ຫົວໜ້າຫລ້ອງ ຊັບສິນຂອງລັດທົ່ວປະເທດ.

ເລື່ອງ: ການເພີ້ມຈຸດບໍລິການຈົດທະບຽນເອກະສານ ຂອງຂະແໜງຄຸ້ມຄອງຊັບສິນຂອງລັດ.

- ອີງຕາມ ລັດຖະບັນຍັດສະບັບເລກທີ 03/ປປທ , ລົງວັນທີ 19/11/2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ບົດແນະນຳເລກທີ 0520/ກງ, ລົງວັນທີ 17/4/2009 ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະບັນຢັດດັ່ງກ່າວ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 52/ນຍ, ລົງວັນທີ 13/3/1993 ວ່າດ້ວຍການຈົດທະບຽນ ເອກະສານ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 80/ນຍ, ລົງວັນທີ 28/2/2007 ວ່າດວ້ຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ແຈ້ງການແນະນຳ ເພີ້ມເຕີມຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 210/ກງ ລົງວັນທີ 31 ມັງກອນ 2011 ວ່າດວ້ຍ ການຈັດຕັ້ງປະຕິບັດ ມາດຕາ 6. ຂອງ ລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19/11/2008 ກ່ຽວກັບການຈົດທະບຽນເອກະສານ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ລັດຖະບັນຍັດສະບັບເລກທີ 03/ປປທ , ລົງວັນທີ19/11/2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ບົດແນະນຳເລກທີ 0520/ກງ, ລົງວັນທີ 17/4/2009 ກ່ຽວກັບການ ຈັດຕັ້ງປະຕິບັດ ແຈ້ງການແນະນຳ ເພີ້ມເຕີມ ຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 210/ກງ,ລົງວັນທີ 31/01/2011 ຂໍ້ 4 ການເພີ້ມຈຸດບໍລິການຈົດທະບຽນເອກະສານ ໃຫ້ກາຍເປັນຮູບປະທຳ ແລະ ມີປະສິດທິຜົນສູງ ແລະ ຈັດເກັບລາຍຮັບໃຫ້ໄດ້ຄົບຖ້ວນ: ລັດຖະມົນຕີວ່າການກະຊວງການເງິນແຈ້ງມາຍັງບັນດາທ່ານ ຫົວໜ້າພະແນກການເງິນແຂວງ, ນະຄອນຫລວງ ຫົວໜ້າພະແນກສວ່ຍສາອາກອນ, ຫົວໜ້າຄັງເງິນແຫ່ງຊາດ, ຫົວໜ້າພາສີເຂດ ແລະ ຫົວໜ້າຫລ້ອງຊັບສິນຂອງລັດທົ່ວປະເທດ ເພື່ອຊາບ ແລະຈັດຕັ້ງປະຕິບັດດັ່ງນີ້:

1. ໃຫ້ເພີ້ມທະວີການຂຸດຄົ້ນແຫລ່ງລາຍຮັບ ທີ່ບົ່ມຊ້ອນ ໂດຍສະເພາະລາຍຮັບຈາກການຈົດທະບຽນເອກະສານເຊິ່ງເຫັນວ່າເປັນແຫ່ລງລາຍຮັບໜຶ່ງທີ່ສຳຄັນສາມາດສ້າງລາຍຮັບເຂົ້າງົບປະມານ ໂດຍໃຫ້ມີການເພີ້ມຈຸດບໍລິການຈົດທະບຽນ ຢູ່ກັບສະຖານທີ ທີ່ມີການແລກປ່ຽນຊື້ - ຂາຍສິນຄ້າເປັນຕົ້ນ ຢູ່ກອງຄຸ້ມຄອງພາຫະນະ, ດ່ານສົ່ງອອກ ຊັບພະຍາກອນ, ເຄື່ອງປ່າຂອງດົງ ແລະ ຈຸດອື່ນໆ ເພື່ອຮັບປະກັນການບໍລິການທີ່ວອ່ງໄວໃຫ້ຜູ້ໃຊ້ບໍລິການ.
2. ເມື່ອເຫັນວ່າຈຸດໃດມີຄວາມຈຳເປັນ ແລະ ເໝາະສົມໃຫ້ນຳສະເໜີອຳນາດການປົກຄອງແຂວງ, ນະຄອນຫລວງ ເພື່ອແຕ່ງຕັ້ງພະນັກງານລົງເຮັດການບໍລິການຢູ່ກັບສະຖານທີ່ດັ່ງກ່າວ.

3. ການຈົດທະບຽນຕ້ອງຮັບປະກັນ ການບໍລິການທີ່ວ່ອງໄວ, ບໍ່ກົດໜ່ວງຖ່ວງດຶງເອກະສານໃຫ້ແກ່ຍາວຫຼາຍວັນໂດຍບໍ່ມີເຫດຜົນ ແລະ ຮັບປະກັນການຈັດຕັ້ງປະຕິບັດການຄິດໄລ່ອັດຕາການຈົດທະບຽນໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້. ມາດຕາ 6. ຂອງລັດຖະບັນຍັດສະບັບເລກທີ 03/ປປທ , ລົງວັນທີ 19/11/2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ .

4. ສຳລັບຈຸດບໍລິການຈົດທະບຽນຢູ່ດ່ານ ແມ່ນໃຫ້ອີງໃສ່ເອກະສານສັນຍາຊື້ - ຂາຍສິນຄ້າສົ່ງອອກ ແລະ ສິນຄ້ານຳເຂົ້າ ເປັນຕົ້ນ ການສົ່ງອອກ ຊັບພະຍາກອນທຳມະຊາດ,ໄມ້, ແຮ່ທາດ, ເຄື່ອງປ່າຂອງດົງ, ຜະລິດຕະພັນໄມ້, ເຄື່ອງເຟີນີເຈີ, ຖ່ານດັງໄຟ, ຜົນຜະລິດຈາກກະສິກຳ, ສັດລ້ຽງ,ສິນຄ້າກະສິກຳ, ອຸດສາຫະກຳ ແລະອື່ນໆ, ສິນຄ້ານຳເຂົ້າທຸກປະເພດ ( ບໍ່ລວມນ້ຳມັນ ).

5. ສຳລັບບາງປະເພດຊັບພະຍາກອນເຊັ່ນ: ໄມ້, ເຄື່ອງປ່າຂອງດົງ ແລະ ອື່ນໆ ເຊິ່ງຈະຕ້ອງຈ່າຍຄ່າຊັບພະຍາກອນລ່ວງໜ້າກ່ອນ ຈຶ່ງອະນຸຍາດໃຫ້ມີການສົ່ງອອກ.

6. ໃຫ້ພາກສ່ວນທີ່ກ່ຽວຂ້ອງ, ຂອງຂະແໜງການເງິນ ເປັນຕົ້ນ ຂະແໜງພາສີ, ສ່ວຍສາອາກອນ, ຄັງເງິນແຫ່ງຊາດໃຫ້ຄວາມຮ່ວມມື ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ດັ່ງນັ້ນ, ຈຶ່ງອອກແຈ້ງການແນະນຳສະບັບນີ້ ມາຍັງພາກສ່ວນກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ຜ່ານການຈັດຕັ້ງປະຕິບັດ ຫາກພົບຄວາມຫຍຸ້ງຍາກປະການໃດນັ້ນ ໃຫ້ລາຍງານຫາກະຊວງການເງິນ ເພື່ອມີວິທີແກ້ໄຂໃຫ້ທັນເວລາ.

ລັດຖະມົນຕີວ່າການກະຊວງການເງິນ.

ກະຊວງການເງິນ
ລັດຖະມົນຕີ

ພູເພັດ ຄຳພູນວົງ